**ການບ້ານບົດທີ 3 ພາກຕົ້ນ**

# ລູກາມາຮ່ວມກັບໂປໂລໃນເມືອງໂທອາດ

(ກຈກ 16:6-10)




## ໝາຍເຫດສຳຄັນ:

ກ. ໃຫ້ອ່ານ ກຈກ 16:6-10 ກ່ອນ.

ຂ. ໃຫ້ສັງເກດທາງທີ່ໂປໂລໄປໃນແຜນທີ່

ຄ. ແລ້ວໃຫ້ຕອບຄຳຖາມຕໍ່ໄປນີ້

**1** ໃນກຈກ 16:6.
ກ. ພະວິນຍານບໍລິສຸດຫ້າມບໍ່ໃຫ້ໂປໂລກ່າວພະທຳໃນແຂວງໃດ? ___________________
ຂ. ແຂວງນັ້ນໝາຍໄວ້ໃນແຜ່ນທີ່ດ້ວຍຕົວເລກໃດ? ______________________________
ຄ. ດັ່ງນັ້ນເຂົາທຽວໄປເຂດແດນເມືອງໃດແດ່? ________________________________
ງ. ສອງເຂດນັ້ນໝາຍໄວ້ດ້ວຍຕົວເລກໃດ? ___________________________________

**2** ກ. ມາເຖິງເຂດມີເຊຍແລ້ວ ເຂົາພະຍາຍາມເຂົ້າເຂດໃດ? (ກຈກ 16:7) ______________
ຂ. ໝາຍໄວ້ໃນແຜນທີ່ດ້ວຍຕົວເລກໃດ? _____________________________________
ຄ. ແມ່ນໃຜບໍ່ອະນຸຍາດໃຫ້ໄປ? __________________________________________

**3** ກ. ຕາມທາງທີ່ໝາຍໄວ້ໃນແຜນທີ່ ໂປໂລຜ່ານບໍ່ເຂົ້າສອງເຂດໃດ?
_____________________________ ແລະ _____________________________
ຂ. ລຽບເມືອງໃດ? (ກຈກ 16:8) __________________________________________
ຄ. ລົງໄປເຖິງເມືອງໃດ? _______________________________________________

**4** ໂປໂລຮູ້ການຊົງນຳຂອງພະວິນຍານບໍລິສຸດ ໂປໂລຊອກຫານ້ຳພະໄທຂອງພະເຈົ້າໂດຍວິທີໃດ? (ເລືອກ)

ກ. ຈົກສະຫຼາກ

ຂ. ສັງເກດທາງທີ່ພະເຈົ້າເປີດ ແລະ ທາງທີ່ປິດ

ຄ. ໂດຍການນັ່ງສະມາທິ

ງ. ລໍຖ້າຈົນຈະເຫັນການນິມິດ

**5** ກ. ພະເຈົ້າປິດທາງບໍ່ໃຫ້ໄປສອງບ່ອນໃດ? ________________________________

ຂ. ພະເຈົ້າເປີດທາງໃຫ້ໄປໃສ? ________________________________________

**6** ກ. ໃນເມືອງໂທອາດນັ້ນ ໂປໂລພົບຜູ້ຂຽນພະທຳກິດຈະການ. ຄົນດຽວກັນນັ້ນຂຽນຂ່າວປະເສີດ ເຫຼັ້ມທີ 3 ຄືພະທຳໃດ? ________________________________

ຂ. ຄົນນັ້ນມີອາຊີບໃດ? (ໂກໂລຊາຍ 4:14) ______________________________

*ຜູ້ຂຽນພະທຳໃນພະຄຳພີໃໝ່ ເປັນຊາດຢິວທຸກຄົນເວັ້ນແຕ່ລູກາຜູ້ດຽວທີ່ເປັນຄົນຕ່າງຊາດ.*

**7** ກ. ເທື່ອທຳອິດທີ່ໂປໂລໄປປະກາດພະທຳໃນຄາລາເຕຍ ສຸຂະພາບເປັນຢ່າງໃດ? (ຄລຕ 4:13)__________________________________________________

ຂ. ຕາມໃນ 1 ຕມທ 5:23. ຕີໂມທຽວມີພະຍາດຢ່າງໃດ? ______________________

______________________________________________________________

ຄ. ດັ່ງນັ້ນເປັນການດີຫຼາຍທີ່ລູກາຢູ່ຮ່ວມກັບເຂົາເພາະລູກາມີອາຊີບໃດ? ___________

ງ. ລູກາມາຮ່ວມກັບເຂົາຕັ້ງແຕ່ເມືອງໃດໄປ? ______________________________

**8** ລູກາເປັນຄົນທີ່ຖ່ອມຕົວ ແລະບໍ່ມັກສະແດງຕົວໃຫ້ຜູ້ອື່ນເຫັນ. ໃນໜັງສືທີ່ເພິ່ນຂຽນ ບໍ່ເຫັນຄຳທີ່ ອ້າງເຖິງຕົວເອງຈັກເທື່ອ ແຕ່ເຖິງຢ່າງນັ້ນກໍຕາມ ຍັງມີຫຼັກຖານທີ່ເພິ່ນຮ່ວມກັບໂປໂລ.

ກ. ເຂົາຮ່ວມໃນເມືອງໃດ? ________________________________________

ຂ. ໃນເມືອງໃດທີ່ ລູກາບໍ່ຢູ່ກັບໂປໂລແລະຕີໂມທຽວເທື່ອ ເພິ່ນໃຊ້ຄຳແທນຊື່ວ່າ “ທ່ານທັງສອງ” (ໃນ ກຈກ 16:6) ແລະ "ທ່ານເຫຼົ່ານັ້ນ" (ໃນ ກຈກ 16:8) ແຕ່ມາເຖິງ ກຈກ 16:10 ຂຽນວ່າ "ພວກເຮົາ".

ໃນ ກຈກ 16:10 ມີຄົນໃດຢູ່ຮ່ວມກັບໂປໂລ ຊີລາ ແລະຕີໂມທຽວ? _____________

**9** ໃນ ກຈກ 16:6 ລູກາຢູ່ກັບພວກເຂົາຫຼືຍັງ? ______________________________

**10** ເຂົາມາເຖິງເມືອງໂທອາດໃນ ກຈກ ບົດ 16 ຂໍ້ໃດ? ___________________________

**11** ກ. ໃນ ກຈກ 16:10 ທີ່ເຂົາຈະເດີນທາງໄປມາເກໂດເນຍ ເຫັນຄຳວ່າ "ພວກເຮົາ" ຈັກເທື່ອ?

______________________________________________________________

ຂ. ໝາຍຄວາມວ່າ ຕັ້ງແຕ່ ກຈກ 16:10 ເປັນຕົ້ນໄປຜູ້ຂຽນຢູ່ຮ່ວມໃນພວກຜູ້ປະກາດພະທຳ. ຜູ້ຂຽນນັ້ນ ຄືໃຜ? ______________________________________________

| |
|---|
| ໃຫ້ທ່ານເອົາສໍສີແດງຂີດອ້ອມຄໍາວ່າ "ໂທອາດ" ໃນ ກຈກ 16:8 ແລະອ້ອມຄໍາວ່າ "ພວກເຮົາ" ທັງສອງເທື່ອໃນ ກຈກ 16:10. ແລະໃຫ້ຂຽນຊື່ "ລູກາ" ໃສ່ຂອບເຈ້ຍຂ້າງ ກຈກ 16:10 |

*ຈົ່ງຮັບພິຈາລະນາ*

- *ໃຫ້ສັງເກດຄໍາເຕືອນຂອງໂປໂລໃນໂລມ 12:3*
  - *ພວກຟາລິຊາຍຫຼົງຜິດຢ່າງນັ້ນໃນ ລູກາ 11:43*
  - *ເຖິງແມ່ນພວກສາວົກຂອງພະອົງກໍຕາມ ແຕ່ເຂົາຍັງຫຼົງຜິດດ້ວຍໃນ ລູກາ 22:24.*
- *ແຕ່ເຫັນວ່າລູກາຖ່ອມຕົວ ເພາະບໍ່ສະແດງຕົວ*
  - *ຜູ້ໃດບໍ່ຢາກຖ່ອມຕົວ ໃຫ້ອ່ານ ມທ 18:4*
  - *ໃນ ຢາໂກໂບ 4:10 ມີຄໍາສັນຍາສະເພາະເພື່ອຄົນທີ່ຖ່ອມຕົວ ຢ່າງລູກາ.*
- *ທ່ານເປັນຢ່າງໃດ? ມັກອວດຕົວ ຫຼືຖ່ອມຕົວ? ໃຫ້ເອົາແບບຂອງລູກາເປັນຕົວຢ່າງ.*

**12** ກ. ຈຸດປະສົງທີ່ພະເຈົ້າຈະໃຫ້ໂປໂລແລະໝູ່ໄປໂທອາດປະການໜຶ່ງຄື ຈະໃຫ້ຮ່ວມກັບໃຜ? _

ຂ. ລູກາມີອາຊີບຫຍັງ? ____________________

**13** ກ. ຈຸດປະສົງອີກປະການໜຶ່ງ ຄືພະອົງຈະໃຫ້ໂປໂລຂ້າມນໍ້າໄປປະກາດພະທໍາໃນແຂວງໃດ? (ກຈກ 16:10) ____________________

ຂ. ໃນເມື່ອໂປໂລຍັງຢູ່ໂທອາດ ພະເຈົ້າບອກທາງໃຫ້ໂປໂລໂດຍເຫັນຫຍັງ? (ກຈກ 16:9)

____________________

ຄ. ເຫັນຊາຍຊາວໃດ? (ກຈກ 16:9) ____________________

ງ. ໂປໂລເຫັນນິມິດຍາມໃດ? (ກຈກ 16:9) ____________________

ຈ. ເຫັນການນິມິດແລ້ວ ເຂົາອອກໄປປະກາດຂ່າວປະເສີດຢູ່ໃສ? (ກຈກ 16:10) ________

____________________

**14** ກ. ເຂົາຂ້າມນໍ້າໄປໃສ? ____________________

ຂ. ມາເກໂດເນຍນັ້ນຢູ່ໃນທະວີບໃດ? (ໃຫ້ເບິ່ງແຜນທີ່) ____________________

**15** ກ. ໃນຮູບນັ້ນ ຕົວອັກສອນໃດໝາຍເຖິງ ລູກາມາປ່າວປະກາດຮ່ວມກັບໂປໂລ? ________

ຂ. ອັກສອນໃດໝາຍເຖິງຊາຍມາເກໂດເນຍ ເອີ້ນເອົາໂປໂລມາປະກາດພະທໍາ? ________

**16** ພະເຈົ້ານໍາໂປໂລໄປເຖິງເມືອງໂທອາດຢູ່ແຄມທະເລເພື່ອຈຸດປະສົງສອງປະການຄື:

ກ. ໃຫ້ພົບກັບເພື່ອນເດີນທາງໃໝ່ຄືໃຜ? ____________________

ຂ. ລູການັ້ນມີອາຊີບຫຍັງ? ____________________

ຄ. ຈາກເມືອງໂທອາດນັ້ນ ໂປໂລຈະເຂົ້າທະວີບໃດ? ____________________

ງ. ແຂວງທໍາອິດທີ່ໂປໂລເຂົ້າທະວີບຢູໂລບຄືແຂວງໃດ? ____________________

**17** ຜົນສຸດທ້າຍ ມີຜູ້ປະກາດພະທຳ 4 ຄົນເດີນທາງຈາກໂທອາດໄປມາເກໂດເນຍ ຄື 4 ຄົນໃດ?

______________________________________________

*ໃຫ້ທວນຄືນແລ້ວ ເສັງຕາມບົດນີ້!*

ຄຳຕອບ:

**1** *ກ. ເຂວງອາເຊຍ ຂ. 6 ຄ. ຟີເຄຍ ແລະ ຄາລາເຕຍ ງ. 3*

**2** *ກ. ບີທີເນຍ ຂ. 4 ຄ. ພະວິນຍານບໍລິສຸດ*

**3** *ກ. ແຂວງອາເຊຍ ແລະ ບີທີເນຍ ຂ. ມີເຊຍ ຄ. ໂທອາດ*

**4** *ຂ ຖືກ*

**5** *ກ. ແຂວງອາເຊຍ ແລະ ບີທີເນຍ ຂ. ໂທອາດ*

**6** *ກ. ລູກາ ຂ. ໝໍຢາ*

**7** *ກ. ມີການເຈັບປ່ວຍ ຂ. ກະເພາະອາຫານ ແລະ ຄວາມອ່ອນແຮງ*
*ຄ. ໝໍຢາ ງ. ໂທອາດ*

**8** *ກ. ໂທອາດ ຂ. ລູກາ*

**9** *ຍັງ*

**10** *ຂໍ້ 8*

**11** *ກ. 2 ເທື່ອ ຂ. ລູກາ*

**12** *ກ. ລູກາ ຂ. ໝໍຢາ*

**13** *ກ. ມາເກໂດເນຍ ຂ. ເຫັນນິມິດ ຄ. ຊາວມາເກໂດເນຍ ງ. ກາງຄືນ*
*ຈ. ມາເກໂດເນຍ*

**14** *ກ. ມາເກໂດເນຍ ຂ. ຢູໂລບ*

**15** *ກ. ຂ ຂ. ກ*

**16** *ກ. ລູກາ ຂ. ໝໍ ຄ. ຢູໂລບ ງ. ມາເກໂດເນຍ*

**17** *ໂປໂລ ຊີລາ ຕີໂມທຽວ ແລະ ລູກາ*

**ການບ້ານບົດທີ 3 ພາກປາຍ**

# ໂປໂລເຂົ້າເມືອງຟີລິບປອຍແຂວງມາເກໂດເນຍ

(ກຈກ 16:11-40)

ຕໍ່ໄປນີ້ເຮົາຈະຮຽນເຖິງ 4 ຄົນທີ່ໂປໂລພົບໃນເມືອງຟີລິບປອຍ. ຮູບ 4 ໄປນີ້ ຈະແນະນຳ 4 ຄົນນັ້ນ. ໃຫ້ທ່ານເບິ່ງຮູບກາຕູນກ່ອນ ແລ້ວຈຶ່ງຮຽນລາຍລະອຽດກ່ຽວກັບແຕ່ລະຄົນ.




໒
ຄົນເຫຼົ່ານີ້ແມ່ນຂ້ອຍໃຊ້
ຂອງພະເຈົ້າສູງສຸດ.
ໃນພະນາມແຫ່ງພະເຢຊູຄຼິດ
ກູສັ່ງມຶງຈົ່ງອອກຈາກຍິງນີ້ເສຍ.
໓
ຂ້ານ້ອຍຈະຕ້ອງເຮັດແນວໃດ
ຈຶ່ງຈະພົ້ນໄດ້ ?
ຈົ່ງເຊື່ອວາງໃຈໃນພະເຢຊູເຈົ້າ
ແລ້ວທ່ານຈະໄດ້ພົ້ນ
໗
ຂ້ອຍຈະຊ່ວຍລູກາ
ຂໍໃຫ້ໂປໂລແລະຊີລາໄປດີ
ໂປໂລບໍ່ຕ້ອງເປັນຫ່ວງຂ້ອຍຈະຢູ່ຊ່ວຍຕີໂມທຽວ.
ໄປກັນເທາະຊີລາ ເຖິງເວລາທີ່ພວກ
ເຮົາຕ້ອງລາຈາກຟີລິບປອຍແລ້ວ
ຖືກຕ້ອງລູກາແລະຕີໂມທຽວ
ຈະດູແລເຂົາເອງ.

# ເລື່ອງ ລີເດຍ

(ກຈກ 16:11-15 ຕາມຮູບ "ກ")

**1** ກ. ອອກຈາກເມືອງໂທອາດ ເຂົາເດີນທາງໄປທາງເຮືອຈັກມື້ ກ່ອນຈະເຖິງເມືອງເນອາໂປລີ ໃນແຂວງມາເກໂດເນຍ? (ກຈກ 16:11) ________________

ຂ. ແຕ່ອີກເທື່ອໜຶ່ງທີ່ເຂົາເດີນທາງກົງກັນຂ້າມ ຈາກເມືອງຟີລິບປອຍແຂວງມາເກໂດເນຍ ເຖິງເມືອງໂທອາດ ໃຊ້ເວລາຈັກມື້? (ກຈກ 20:6) ________________

*ສະແດງວ່າ ໃນເວລາເຂົາຈະໄປເທື່ອທຳອິດນັ້ນ ພະເຈົ້າໃຫ້ລົມພັດຢ່າງຖືກຕ້ອງຈຶ່ງໄປໄດ້ສະດວກ.*

**2** ກ. ອອກຈາກເນອາໂປລີແລ້ວ ເຂົາໄປໃສ? (ກຈກ 16:12) ________________

ຂ. ໃນແຜນທີ່ໜ້າ 24 ຟີລິບປອຍໝາຍດ້ວຍຕົວເລກໃດ? ________________

ຄ. ເມືອງນັ້ນເປັນບ່ອນທຳອິດທີ່ໂປໂລປະກາດພະທຳໃນແຂວງໃດ? ________________

**3** ກ. ພົນລະເມືອງຟີລິບປອຍສ່ວນຫຼາຍເປັນຊາວໃດ? (ກຈກ 16:20-21) ________________

ຂ. ຜູ້ປົກຄອງເປັນຊາວໃດ? ________________

ຄ. ຂຶ້ນກັບຈັກກະພັດໃດ? ________________

*ໃຫ້ອ່ານຄຳອະທິບາຍ ລຸ່ມໜ້າ 390 ໃນພະຄຳພີ ເປັນຄຳອ້າງຈາກ ກຈກ 16:12)*

**4** ກ. ເມືອງຟີລິບປອຍບໍ່ມີຄົນຢິວຫຼາຍ ດັ່ງນັ້ນໂປໂລໄປເທດສະໜາໃນໂຮງທຳມະເທດສະໜາຢິວ ບໍ່ໄດ້ເພາະບໍ່ມີໂຮງທຳ. ຄົນຢິວທີ່ມີຢູ່ນັ້ນໄປໄຫວ້ວອນຢູ່ໃສ? (ກຈກ 16:13)

________________

ຂ. ໄປໄຫວ້ວອນວັນໃດ? ________________

ຄ. ແມ່ນພວກຊາວໃດທີ່ໄປໄຫວ້ວອນຝັ່ງແມ່ນ້ຳນອກເມືອງ? ________________

ງ. ຜູ້ປະກາດ 4 ຄົນໃດໄປໄຫວ້ວອນກັບເຂົາ? ________________

**5** ກ. ຜູ້ປະກາດນັ້ນນັ່ງລົງສົນທະນາກັບໃຜ? (ກຈກ 16:13) ________________

ຂ. ໂປໂລປະກາດຂ່າວປະເສີດເລື່ອງພະເຢຊູ ແລ້ວພະເຈົ້າໄຂຈິດໃຈຂອງຜູ້ຍິງຊື່ຫຍັງ? (ກຈກ 16:14) ________________

ຄ. ລີເດຍເປັນຄົນຂາຍຜ້າສີຫຍັງ? ________________

**6** ກ. ລີເດຍຮັບສິນຫຍັງ? (ກຈກ 16:15) ________________

ຂ. ມີຜູ້ໃດອີກທີ່ຮັບພ້ອມກັບລີເດຍ? ________________

**7** ລີເດຍເຊີນໃຫ້ຜູ້ປະກາດພະທຳນັ້ນພັກອາໄສບ່ອນໃດ? ________________

## ຍິງມີຜີໝໍດູສິງ

(ກຈກ 16:16-24 ຕາມຮູບ "ຂ")

**8** ພວກຜູ້ປະກາດພະທຳນັ້ນ ໄປໂຮມຢູ່ຝັ່ງແມ່ນ້ຳທຸກວັນ ເພື່ອອ້ອນວອນແລະສັ່ງສອນພວກຄຣິດສະຕຽນທີ່ເຊື່ອ ໃໝ່. ຕີໂມທຽວກໍຮຽນເອົາຕາມແບບຂອງໂປໂລໃນເມື່ອໂປໂລເທດສະໜາ.

ກ. ວັນໜຶ່ງເຂົາເຫັນຍິງໃຊ້ຄົນໜຶ່ງທີ່ມີຜີຢ່າງໃດສິງຢູ່? (ກຈກ 16:16) ________________

ຂ. ຜູ້ຍິງເຄີຍໃຊ້ວິຊາໝໍດູຫາເງິນໃຫ້ໃຜ? ____________________________________

ຄ. ຍິງນັ້ນຕິດຕາມໂປໂລຮ້ອງຕາມເຂົາດົນປານໃດ? (ກຈກ 16:18) ________________

ງ. ໂປໂລສັ່ງຜີນັ້ນຢ່າງໃດ? ____________________________________________

**9** ກ. ເມື່ອພວກນາຍຂອງຍິງນັ້ນເຫັນວ່າຕົນໝົດຫວັງທີ່ຈະໄດ້ເງິນແລ້ວ ເຂົາຈັບໃຜ? (ກຈກ 16:19) ____________________________________________________

ຂ. ລາກໄປຫາໃຜ? ____________________________________________________

ຄ. ຢູ່ໃສ? ________________________________________________________

**10** ເມືອງຟີລິບປອຍເປັນສູນກາງ ທີ່ເຈົ້າໜ້າທີ່ຈັກກະພັດໂລມປົກຄອງແຂວງຕາມກົດໝາຍໂລມ.

ກ. ນາຍຂອງຍິງນັ້ນກ່າວຫາວ່າ ເປັນຊາດຢິວທີ່ມາກໍ່ການວຸ້ນວາຍໂດຍການປະກາດຮີດຄອງປະເພນີ ຜິດກົດຂອງພວກຊາວໃດ? (ກຈກ 16:21) __________________________

ຂ. ຜູ້ປົກຄອງເຮັດຢ່າງໃດກັບເຄື່ອງນຸ່ງຂອງໂປໂລກັບຊີລາ? (ກຈກ 16:22) __________

ຄ. ແລ້ວສັ່ງໃຫ້ເອົາໄມ້ເຮັດຫຍັງ? (ກຈກ 16:22) ______________________________

ງ. ຂ້ຽນແລ້ວ ເອົາໄປໃສ? (ກຈກ 16:23-24) _________________________________

## ເລື່ອງ ທຳມະໂຮງ

(ຜູ້ຄຸມຄຸກ ໃນ ກຈກ 16:16-24 ຕາມຮູບ "ຄ")

**11** ກ. ເຂົາຂັງໂປໂລແລະຊີລາໄວ້ໃນຫ້ອງຊັ້ນໃນ ແລະເອົາຕີນໃສ່ຂື່ໄວ້ໃຫ້ແໜ້ນ ແຕ່ເຂົາບໍ່ທໍ້ໃຈ. ເຖິງວ່າເຂົາຢູ່ຢ່າງລຳບາກກໍຕາມ ເຂົາກໍພາກັນເຮັດຫຍັງ? (ກຈກ 16:25) __________

______________________________________________________________

ຂ. ແມ່ນຜູ້ໃດຟັງ? ____________________________________________________

**12** ກ. ໃນເວລານັ້ນເກີດມີຫຍັງ? (ກຈກ 16:26) __________________________________

ຂ. ທຳມະໂຮງນຶກວ່ານັກໂທດໜີໄປໝົດແລ້ວ ເລີຍຊັກດາບອອກຈະເຮັດຫຍັງ? (ກຈກ 16:27)____________________________________________________

**13** ກ. ໂປໂລຮ້ອງສຽງດັງວ່າຢ່າງໃດ? (ກຈກ 16:28) ______________________________

______________________________________________________________

ຂ. ຜົນສຸດທ້າຍ ແມ່ນໃຜທີ່ວາງໃຈເຊື່ອໃນພະເຈົ້າ? (ກຈກ 16:30 ແລະ 34) ___________

**14** ກ. ເພິ່ນພາໂປໂລກັບຊີລາໄປລ້າງບາດ ແລ້ວຮັບສິ່ງໃດ? (ກຈກ 16:33) ____________

ຂ. ແລະມີຜູ້ໃດອີກທີ່ຮັບບັບຕິສະມາດ້ວຍ? ________________________________

**15** ພະທຳກິດຈະການລາຍງານເລື່ອງສອງຄົນໃນເມືອງຟີລິບປອຍທີ່ຮັບເຊື່ອໃນພະເຢຊູ.

ກ. ເລື່ອງໃຜໃນ ກຈກ 16:14? ________________________________________

ຂ. ເລື່ອງໃຜໃນ ກຈກ 16:29-31? ____________________________________

ຄ. ທັງສອງຮັບສິ່ງໃດໃນທັນທີນັ້ນ? (ກຈກ 16:15 ແລະ 33) ____________________

ງ. ຮັບພ້ອມດ້ວຍກັບໃຜ? (ກຈກ 16:15 ແລະ 33) ____________________________

## ລູກາຢູ່ປະຈຳໃນຟີລິບປອຍ

(ກຈກ 16:35-40 ຕາມຮູບ "ງ")

**16** ໃຫ້ທ່ານກັບໄປເບິ່ງຮູບໜ້າ ຮູບໃດສະແດງເຖິງເວລາໂປໂລຢູ່ໃນເມືອງຟີລິບປອຍ? _____

**17** ຮຸ່ງເຊົ້າມາແລ້ວ ພວກຜູ້ປົກຄອງໃຊ້ທະຫານມາປ່ອຍເຂົາທັງສອງໄປ ແຕ່ໂປໂລບໍ່ຍອມໄປ ເພາະ ໂປໂລເປັນສັນຊາດໃດ? (ກຈກ 16:37) ______________________________

**18** ໃນສະໄໝຈັກກະພັດໂລມນັ້ນ ຜູ້ໃດທີ່ເປັນຊົນຊາດໂລມ ຄືເປັນພົນລະເມືອງໂລມມີສິດພິເສດ. ເຖິງ ຈະເປັນຊາວໃດກໍຕາມ ພາສາໃດກໍຕາມ ການເປັນພົນລະເມືອງໂລມເປັນປະໂຫຍດຫຼາຍ. ມີວິທີ ທາງຫຼາຍຢ່າງທີ່ເຂົາຈະຮັບສິດພິເສດນັ້ນຄື:

- *ບາງຄົນຮັບເປັນລາງວັນ*
- *ບາງຄົນຊື້ສິດໂດຍລາຄາສູງ*
- *ບາງຄົນເກີດເປັນພົນລະເມືອງໂລມຈາກພໍ່*

ກ. ໃນ ກຈກ 22:27 ມີນາຍພັນຖາມໂປໂລຢ່າງໃດ? __________________________

ຂ. ໂປໂລຕອບຢ່າງໃດ? ____________________________________________

ຄ. ນາຍພັນນັ້ນຕ້ອງເສຍຫຍັງກ່ອນຈະເປັນສັນຊາດໂລມໄດ້? __________________

ງ. ຝ່າຍໂປໂລເປັນພົນລະເມືອງໂລມໂດຍວິທີໃດ? ____________________________

ຈ. ຄືໂປໂລຮັບສິດເປັນພົນລະເມືອງໂລມຈາກໃຜ? ____________________________

**19** ກ. ໂປໂລເຕືອນໃຈພວກຜູ້ປົກຄອງນັ້ນວ່າ ເຂົາເຮັດສອງປະການໃດທີ່ບໍ່ຍຸດຕິທຳ? (ກຈກ 16:37)________________________________________________

ຂ. ພວກຜູ້ປົກຄອງໄດ້ຍິນວ່າໂປໂລກັບຊີລາເປັນຄົນສັນຊາດໂລມເຂົາເປັນຢ່າງໃດ? (ກຈກ 16:38) ______________________________________________

**20** ກ. ພວກຜູ້ປົກຄອງນັ້ນພາກັນມາຂໍອະໄພ ແລ້ວຂໍໃຫ້ໂປໂລກັບຊີລາອອກຈາກໃສ? (ກຈກ 16:39)________________________________________________

ຂ. ເຂົາອອກຈາກຄຸກແລ້ວ ເຂົາກັບໄປເຮືອນໃຜອີກ? (ກຈກ 16:40) ______________

ຄ. ລາຈາກພີ່ນ້ອງໄປແລ້ວ ເຂົາເດີນທາງຜ່ານເມືອງອຳຟີໂປລີແລະເມືອງອາໂປໂລນີໄປເຖິງ ເມືອງໃດ? (ກຈກ 17:1) ______________________________________

**21** ກ. ມີ 4 ຄົນໃດເຂົ້າເມືອງຟີລິບປອຍ? ____________________________________

____________________________________________________________

ຂ. ແຕ່ໃນ ກຈກ 17:1 ມີສອງຄົນໃດອອກໄປ? ______________________________

ຄ. ມີສອງຄົນໃດທີ່ຍັງຢູ່? ____________________________________________

**22** ແຕ່ບໍ່ດົນ ເຫັນຜູ້ໃດຢູ່ໃນເມືອງເບຣອຍອາກັບຊີລາ? (ກຈກ 17:14) ________________

**23** ກ. ດັ່ງນັ້ນ ແມ່ນຜູ້ໃດທີ່ຢູ່ໃນເມືອງຟີລິບປອຍເທິງກວ່າໝູ່? _____________________

ຂ. ຕະຫຼອດໄລຍະທີ່ໂປໂລບໍ່ຢູ່ ຈົນໂປໂລກັບມາຢ້ຽມຢາມໃນເວລາເດີນທາງປະກາດພະທຳເທື່ອ ທີ 3 ລູກາຢູ່ໃນເມືອງຟີລິບປອຍ. ເລື່ອງນີ້ເຮົາຮູ້ໄດ້ເພາະໃນຄຳຂຽນເລື່ອງການເດີນທາງໄປ ປະກາດພະທຳ ເພິ່ນບໍ່ໃຊ້ຄຳ "ພວກເຮົາ" ຕໍ່ໄປ. ໃນ ກຈກ 17:10 ລູກາຢູ່ກັບເຂົາເວລາ ເຂົ້າເບຣອຍອາບໍ່? ________________________________________

**24** ແມ່ນແຕ່ເວລາໂປໂລກັບມາເກໂດເນຍ ໃນເວລາອອກໄປປະກາດພະທຳເທື່ອທີ 3 ທີ່ລູກາຮ່ວມກັບ ໂປໂລອີກ. ເລື່ອງນີ້ເຮົາຮູ້ໄດ້ເພາະໃນ ກຈກ 20:6 ລູກາກັບໄປໃຊ້ຄຳໃດອີກ? (ເລືອກ)

ກ. ຝ່າຍພວກເຂົາ

ຂ. ຝ່າຍພວກເຮົາ

ຄ. ຝ່າຍພວກເພິ່ນ

| |
|---|
| ໃຫ້ທ່ານຂຽນຄຳວ່າ "ລູກາຢູ່ປະຈຳໃນຟີລິບປອຍ" ຫຼັງຈາກ ກຈກ 16:40 |

| |
|---|
| ໃຫ້ທ່ານເອົາບິກສີແດງຂີດອ້ອມຄຳວ່າ "ພວກເຮົາ" ແລະ "ຈາກເມືອງຟີລິບປອຍ" ໃນ ກຈກ 20:6 |

| |
|---|
| ໃຫ້ຂຽນຄຳວ່າ "ລູກາເຂົ້າຮ່ວມອີກ" ຂ້າງ ກຈກ 20:6 |

*ຈົ່ງພິຈາລະນາເລື່ອງລູກາ*

**25** ກ. ຜູ້ມີຄວາມຮູ້ເລື່ອງພະຄຳພີ ຄາດວ່າໂປໂລອາຍຸປະມານ 50 ປີ ເວລາລາຈາກລູກາໃນເມືອງ ຟີລິບປອຍ (ກຈກ 16:40) ແລ້ວອາຍຸປະມານ 56 ປີ ເວລາກັບມາອີກ (ກຈກ 20:6). ຖ້າຢ່າງນັ້ນ ລູກາຢູ່ປະຈຳກັບພີ່ນ້ອງໃນເມືອງຟີລິບປອຍຈັກປີ? ___________________

ຂ. ຈາກເວລານັ້ນຕໍ່ໄປ ລູກາເດີນທາງກັບໂປໂລ ຈົນໂປໂລຖືກປະຫານຊີວິດໃນກຸງໂລມ ເມື່ອ ອາຍຸປະມານ 67 ປີ. ແມ່ນໃຜທີ່ຢູ່ກັບໂປໂລໃນເວລານັ້ນ? (2 ຕມທ 4:11) __________

ຄ. ລູກາເປັນຕົວຢ່າງຕາມແບບ 1 ກລທ 15:58 ຢ່າງໃດ? ________________________

_________________________________________________________________

ງ. ຕາມແບບ ຄລຕ 6:9 ຢ່າງໃດ? ________________________________________

_________________________________________________________________

**26** ໃຫ້ກັບໄປເບິ່ງຮູບ 4 ໃບໜ້າ 28 ແລະ 29.

ກ. ຮູບໃດເປັນທຳມະໂຮງ? ______________________________________

ຂ. ຮູບໃດຄືລີເດຍ? __________________________________________

ຄ. ຮູບໃດຄືລູກາ? ___________________________________________

ງ. ແລະຮູບໃດຍິງມີຜີສິງ? _____________________________________

ຄໍາຕອບ:

**1** *ກ. 2 ມື້ ຂ. 5 ມື້*

**2** *ກ. ຟີລິບປອຍ ຂ. 5 ຄ. ມາເກໂດເນຍ*

**3** *ກ. ໂລມ ຂ. ໂລມ ຄ. ໂລມ*

**4** *ກ. ຝັ່ງແມ່ນໍ້າ (ນອກເມືອງ) ຂ. ວັນຊະບາໂຕ ຄ. ຢິວ*
*ງ. ໂປໂລ ຊີລາ ຕີໂມທຽວ ແລະ ລູກາ*

**5** *ກ. ພວກຜູ້ຍິງ ຂ. ລີເດຍ ຄ. ສີມ່ວງອ່ອນ*

**6** *ກ. ບັບຕິສະມາ ຂ. ໄທເຮືອນ*

**7** *ໃນເຮືອນຂອງລີເດຍ*

**8** *ກ. ຜີໝໍດູ ຂ. ໃຫ້ນາຍຂອງຕົນ ຄ. ຫຼາຍວັນ ງ. ສັ່ງໃຫ້ອອກ*

**9** *ກ. ຈັບໂປໂລແລະຊີລາ ຂ. ຫາພວກຜູ້ປົກຄອງ ຄ. ບ່ອນຊຸມນຸມ*

**10** *ກ. ຊາວໂລມ ຂ. ຈີກ ຄ. ເອົາໄມ້ແສ້ຂ້ຽນ ງ. ຍັດໃສ່ຄຸກ*

**11** *ກ. ອ້ອນວອນ ແລະ ຮ້ອງເພງ ຂ. ພວກນັກໂທດ*

**12** *ກ. ແຜ່ນດິນໄຫວ ຂ. ຈະຂ້າຕົວຕາຍ.*

**13** *ກ. ຢ່າເຮັດຮ້າຍອັນໃດແກ່ຕົວເທາະ ພວກເຮົາຍັງຢູ່ທີ່ນີ້ທຸກຄົນ. ຂ. ທໍາມະໂຮງ.*

**14** *ກ. ບັບຕິສະມາ. ຂ. ທັງຄົວເຮືອນ.*

**15** *ກ. ລີເດຍ ຂ. ທໍາມະໂຮງ ຄ. ຮັບບັບຕິສະມາ ງ. ທັງຄອບຄົວ*

**16** *ຮູບ ກ*

**17** *ສັນຊາດໂລມ*

**18** *ກ. "ເຈົ້າເປັນຄົນສັນຊາດໂລມຫຼື?" ຂ. ແມ່ນແລ້ວ ຄ. ຕ້ອງເສຍເງິນຫຼາຍ*
*ງ. ໂດຍກໍາເນີດ ຈ. ຈາກພໍ່*

**19** *ກ. ຂ້ຽນ ແລະຍັດໃສ່ຄຸກໄວ້ ຂ. ຕົກໃຈ*

**20** *ກ. ຟີລິບປອຍ ຂ. ເຮືອນຂອງລີເດຍ ຄ. ເທຊະໂລນິກ*

**21** *ກ. ໂປໂລ ຊີລາ ຕີໂມທຽວ ແລະ ລູກາ ຂ. ໂປໂລ ແລະ ຊີລາ*
*ຄ. ຕີໂມທຽວ ແລະ ລູກາ*

**22** *ຕີໂມທຽວ*

**23** *ກ. ລູກາ ຂ. ບໍ່*

**24** *ຂ ຖືກ*

**25** *ກ. 6 ປີ ຂ. ລູກາ ຄ. (ບໍ່ມີຄໍາຕອບຕາຍຕົວ) ງ. (ບໍ່ມີຄໍາຕອບຕາຍຕົວ)*

**26** *ກ. ຮູບ ຄ ຂ. ຮູບ ກ ຄ. ຮູບ ງ ງ. ຮູບ ຂ*

## *ໃນການປະຊຸມບົດທີ 3*

# ຄຼິດສະຕະຈັກຟີລິບປອຍທີ່ສະໜັບສະໜູນໂປໂລ

## ຄໍານໍາ

**1** ຈາກນີ້ຕໍ່ໄປເຮົາຈະສຶກສາເລື່ອງພະທໍາຟີລິບປອຍ ທີ່ກາຍເປັນຄຼິດສະຕະຈັກທີ່ຕັ້ງໝັ້ນກວ່າໝູ່ໃນ ການອຸດໜູນໂປໂລເວລາອອກໄປປະກາດພະທໍາຂອງພະເຈົ້າ. ຕາມໃນ ຟລປ 1:7 ໂປໂລຖືກ ຫຍັງໃນເວລານັ້ນ? ______________________________________________

*ຄາດວ່າ ຖືກຈໍາຈ່ອງໄວ້ໃນກຸງໂລມ ຫຼັງຈາກທີ່ຕັ້ງຄຼິດສະຕະຈັກຟີລິບປອຍໄວ້ ປະມານ 10 ປີ.*

**2** ກ. ໃນສະໄໝນັ້ນບໍ່ມີໄປສະນີ. ຖ້າຈະຝາກຈົດໝາຍຕ້ອງຝາກກັບຄົນທີ່ເດີນທາງໄປ. ໂປໂລອາດຈະຝາກຈົດໝາຍນີ້ກັບໃຜ? (ຟລປ 2:19) ____________________________

ຂ. ຄົນໃດມີສ່ວນໃນການແຕ່ງຈົດໝາຍນີ້ - ອາດຈະເປັນສະໝຽນ? (ຟລປ 1:1) ________

**3** ໃຫ້ອ່ານ ຟລປ 2:19-24. ປະມານ 10 ປີທີ່ຕີໂມທຽວຕິດຕາມໂປໂລ ເພິ່ນກາຍເປັນ ຄົນທີ່ເອົາໃຈໃສ່. ແຕ່ກ່ອນທ່ານໄດ້ຮຽນຮູ້ເລື່ອງຄົນທີ່ຊື່ວ່າ ໂຢຮັນມາລະໂກ.

ກ. ໂຢຮັນມາລະໂກແລະຕີໂມທຽວມີສ່ວນຄ້າຍຄືກັນຢ່າງໃດ?

______________________________________________________________

______________________________________________________________

ແຕ່ເຂົາມີສ່ວນແຕກຕ່າງກັນໄປ:

ຂ. ໂຢຮັນມາລະໂກເປັນຢ່າງໃດ? (ກຈກ 13:5 ແລະ 13 ກຈກ 15:37-38)

______________________________________________________________

ຄ. ຕີໂມທຽວເປັນຢ່າງໃດ? (ຟລປ 2:19-24)

______________________________________________________________

______________________________________________________________

*ຈົດໝາຍນີ້ ກ່າວຂ່າວດີເລື່ອງຕີໂມທຽວແລະຂ່າວດີເລື່ອງຄຼິດສະຕະຈັກເມືອງຟີລິບປອຍດ້ວຍ. ຄຼິດສະຕະຈັກນີ້ ກາຍເປັນຄຼິດສະຕະຈັກທີ່ໝັ້ນຄົງ ໃນການຊ່ວຍຊູໂປໂລ. ຈາກນີ້ຕໍ່ໄປເຮົາຈະຮຽນ ເລື່ອງການສະໜັບສະໜູນນັ້ນຈາກສອງແງ່ຄື:*

- *ສະໜັບສະໜູນໃນເວລາໃດ*
- *ສະໜັບສະໜູນຢ່າງໃດ*

## ສະໜັບສະໜູນໃນເວລາໃດ

**4** ໃຫ້ອ່ານ ຟີລິບປອຍ 1:4-5.

ກ. ຄຼິດສະຕະຈັກໃນເມືອງຟີລິບປອຍ ມີສ່ວນດ້ວຍກັນກັບໂປໂລໃນການງານໃດ? ______

ຂ. ມີສ່ວນຕັ້ງແຕ່ເວລາໃດ? ________________________________________

ຄ. ຈົນເຖິງເວລາໃດ? ___________________________________________

*ຄືຕະຫຼອດ 10 ປີ*

**5** ເຂົາຊ່ວຍພວກຜູ້ທີ່ມາກັບໂປໂລຕັ້ງແຕ່ວັນເລີ້ມຕົ້ນ
ກ. ເຂົາຊ່ວຍຢ່າງໃດໃນ ກຈກ 16:15? ______________________________
ຂ. ຊ່ວຍຢ່າງໃດໃນ ກຈກ 16:33-34? ______________________________

**6** ກ. ເມື່ອໂປໂລຢູ່ເມືອງເທຊະໂລນິກ ຄຼິດສະຕະຈັກຟີລິບປອຍຊ່ວຍຢ່າງໃດ? (ຟລປ 4:16)
______________________________
ຂ. ຄຼິດສະຕະຈັກໃນເມືອງຟີລິບປອຍ ຕັ້ງໄວ້ດົນປານໃດກ່ອນຈະສົ່ງສິ່ງຂອງໃຫ້ໂປໂລໃນເມືອງ ເທຊະໂລນິກ? ______________________________
ຄ. ຊ່ວຍແຕ່ເທື່ອດຽວບໍ່? ______________________________

*ເຖິງວ່າຢູ່ໃນແຂວງດຽວກໍຕາມ ແຕ່ເມືອງເທຊະໂລນິກຢູ່ຫ່າງຈາກເມືອງຟີລິບປອຍ ປະມານ 160 ກິໂລແມດ.*

**7** ອອກຈາກແຂວງມາເກໂດເນຍແລ້ວ ໂປໂລເດີນທາງຕໍ່ໄປເຖິງກຸງອາແຖນ ແລະເມືອງ ໂກລິນໂທ ໃນແຂວງອະຂາຢາ.
ກ. ເມື່ອນັ້ນ ຄຼິດສະຕະຈັກເມືອງຟີລິບປອຍຊ່ວຍໂປໂລຢ່າງໃດ? (ຟລປ 4:14-15) _______
______________________________
ຂ. ເມື່ອໂປໂລປະກາດພະທຳໃນເມືອງໂກລິນໂທແມ່ນພີ່ນ້ອງແຂວງໃດຊ່ວຍໃຫ້ມີພໍກັບຄວາມ ຕ້ອງການ? (2 ກລທ 11:9) ______________________________
ຄ. ຄຼິດສະຕະຈັກອື່ນ ໆ ໃນແຂວງມາເກໂດເນຍຊ່ວຍບໍ່? (ຟລປ 4:15) ______________
ງ. ຍັງເຫຼືອຄຼິດສະຕະຈັກດຽວທີ່ຊ່ວຍແທ້ ຄືຄຼິດສະຕະຈັກໃດ? ____________________

**8** ຜ່ານມາອີກ 10 ປີ ໂປໂລຂຽນຈົດໝາຍໄປຫາພີ່ນ້ອງໃນຄຼິດສະຕະຈັກຟີລິບປອຍ ເພື່ອຂອບໃຈເຂົາ.
ກ. ໃນເວລານັ້ນ ໂປໂລພົບບັນຫາໃດ? (ຟລປ 1:7) ______________________________
ຂ. ແມ່ນໃຜມີສ່ວນຮ່ວມກັບໂປໂລເວລາຖືກຈຳຈ່ອງ? ______________________________
ຄ. ໃຜມີສ່ວນຮ່ວມເວລາປະກາດຂ່າວປະເສີດ? ______________________________

**9** ແມ່ນແຕ່ຄຼິດສະຕະຈັກຟີລິບປອຍທີ່ສະໜັບສະໜູນໂປໂລຢ່າງສະໝ່ຳສະເໝີ ແຕ່ມີຄາວໜຶ່ງທີ່ ເຂົາຊ່ວຍບໍ່ໄດ້. ໃຫ້ອ່ານ ຟລປ 4:10-11. ໃນເວລານັ້ນເຂົາຍັງຄຶດເຖິງໂປໂລ ແຕ່ບໍ່ມີໂອກາດ ເຮັດຫຍັງ? ______________________________

**10** ແຕ່ບໍ່ແມ່ນວ່າເຂົາເລີກບໍ່ຖະຫວາຍ
ກ. 2 ກລທ 8:1-2 ອ້າງເຖິງຄຼິດສະຕະຈັກແຂວງໃດ? ______________________________
ຂ. ເຂົາຢາກຊ່ວຍພວກໃດ? (2 ກລທ 8:4) ______________________________

*ໃນເຫຼັ້ມທີ 3 ເຮົາຈະຮຽນເລື່ອງເທື່ອທີສາມທີ່ໂປໂລເດີນທາງອອກໄປປະກາດພະທຳ. ແມ່ນໃນເວລານັ້ນທີ່ໂປໂລຮິບໂຮມຊັບໄວ້ຈາກຄຼິດສະຕະຈັກຕ່າງ ໆ ເພື່ອຊ່ວຍພີ່ນ້ອງທີ່ທຸກຍາກໃນກຸງເຢລູຊາເລັມ. (ໃຫ້ອ່ານ ໂລມ 15:26 ແລະ 1 ໂກລິນໂທ 16:1-2)*

**11** ເຫັນວ່າໂປໂລເປັນຫ່ວງຄົນທີ່ທຸກຍາກ ດັ່ງນັ້ນເພິ່ນຈັດຕັ້ງການຮິບໂຮມຊັບໄວ້ເພື່ອເຂົາ. ຄຼິດສະຕະ ຈັກໃນເມືອງໂກລິນໂທບໍ່ເຕັມໃຈທີ່ຈະຊ່ວຍປານໃດ. ດັ່ງນັ້ນໂປໂລຍົກຄວາມເພື່ອແຜ່ຂອງຄຼິດສະຕະຈັກ ໃນມາເກໂດເນຍມາເປັນຕົວຢ່າງໃຫ້ຄຼິດສະຕະຈັກໃນອາຂະຢາສັງເກດ. (2 ກລທ 8:8 ແລະ 2 ກລທ 9:1-5)

ກ. ແມ່ນຄຼິດສະຕະຈັກໃດທີ່ຂີ້ຖີ່ກວ່າໝູ່? ____________________________________

ຂ. ຄຼິດສະຕະຈັກໃດທີ່ໃຈກວ້າງກວ່າໝູ່? ____________________________________

*ຄຼິດສະຕະຈັກໃນເມືອງຟີລິບປອຍ ຊ່ວຍອາຈານໂປໂລໂດຍມີສ່ວນຖະຫວາຍຢ່າງນ້ອຍ 5 ຄັ້ງ. ສາມຄັ້ງແລກເມື່ອໂປໂລເດີນທາງໄປປະກາດພະທຳເທື່ອທຳອິດ ຄື*

- *ຕັ້ງແຕ່ວັນຕົ້ນໃນ ຟລປ 1:5*
- *ຫຼາຍເທື່ອເມື່ອຢູ່ໃນເທຊະໂລນິກ ໃນ ຟລປ 4:16*
- *ເມື່ອຢູ່ອະຂາຢາ ໃນ ຟລປ 4:15 ແລະ 2 ກລທ 11:9*

*ອີກຄັ້ງໜຶ່ງທີ່ໂປໂລຂໍເງິນຊ່ວຍເຫຼືອພີ່ນ້ອງໃນກຸງເຢລູຊາເລັມ ເວລາໂປໂລເດີນທາງໄປປະກາດພະທຳ ເທື່ອທີ 3*

- *ໃນ 2 ກລທ 8:1-4*

*ແລ້ວອີກເທື່ອໜຶ່ງທີ່ໂປໂລຖືກຂັງຄຸກໄວ້ (ອາດຈະຢູ່ໃນກຸງໂລມ)*

- *ສົ່ງໂດຍເອປາໂຟດີໂຕ ໃນ ຟລປ 4:18.*

| | | |
|---|---|---|
| ໃຫ້ທ່ານຂຽນຄຳວ່າ | "ຖະຫວາຍທີ 1" | ຂ້າງ ຟລປ 1:5 |
| ຂຽນຄຳວ່າ | "ຖະຫວາຍທີ 2" | ຂ້າງ ຟລປ 4:16 |
| ຂຽນຄຳວ່າ | "ຖະຫວາຍທີ 3" | ຂ້າງ ຟລປ 4:15 |
| | ແລະ | ຂ້າງ 2 ກລທ 11:9 ດ້ວຍ |
| ຂຽນຄຳວ່າ | "ຖະຫວາຍທີ 4" | ຂ້າງ 2 ກລທ 8:1-4 |
| ຂຽນຄຳວ່າ | "ຖະຫວາຍທີ 5" | ຂ້າງ ຟລປ 4:18. |

## ສະໜັບສະໜູນຢ່າງໃດ

**12** ກ. ຄຼິດສະຕະຈັກໃນເມືອງຟີລິບປອຍອ້ອນວອນຂໍຫຍັງ? (2 ກລທ 8:4)

________________________________________________________________

- *ໃຫ້ສັງເກດເບິ່ງ! ເຂົາບໍ່ຂໍຄວາມຊ່ວຍເຫຼືອ ເຂົາຂໍຢາກມີໂອກາດທີ່ຈະຊ່ວຍຜູ້ອື່ນ.*

ຂ. ເຂົາຖະຫວາຍຕົວເອງແກ່ໃຜກ່ອນ? (2 ກລທ 8:5) ________________________

**13** ເຫັນວ່າເຫດທີ່ຄຣິດສະຕຽນໃນເມືອງຟີລິບປອຍພ້ອມທີ່ຈະຖະຫວາຍຕົວຮັບໃຊ້ໃຫ້ຄົນອື່ນ ແມ່ນເຂົາໄດ້ຖະ ຫວາຍຕົວໃຫ້ພະເຈົ້າກ່ອນ.

ກ. ຄຣິດສະຕຽນຊາວຟີລິບປອຍ ທີ່ເອົາຂອງຖະຫວາຍໄປໃຫ້ໂປໂລໃນຄຸກກຸງໂລມຊື່ຫຍັງ? (ຟລປ 4:18) ______________________________

ຂ. ບໍ່ແມ່ນວ່າເພິ່ນສົ່ງຂອງໄປຢ່າງດຽວ. ເອປາໂຟດີໂຕໜູນໃຈໂປໂລໃນຫຼາຍດ້ານຄື ດ້ານໃດແດ່? (ຟລປ 2:25-30)

______________________________

______________________________

______________________________

______________________________

______________________________

**14** ມີຄຣິດສະຕຽນອີກຫຼາຍຄົນໃນເມືອງຟີລິບປອຍ ທີ່ຄ້າຍຄືກັນກັບເອປາໂຟດີໂຕ.

ກ. ໃນການບ້ານນັ້ນ ທ່ານຮຽນຮູ້ເລື່ອງຄຣິດສະຕຽນຄົນໃດແດ່ໃນເມືອງຟີລິບປອຍທີ່ມີໃຈຢາກຖະຫວາຍ?______________________________

______________________________

ຂ. ເຂົາມີສ່ວນຄ້າຍຄືກັບເອປາໂຟດີໂຕຢ່າງໃດ? ______________________________

______________________________

**15** ກ. ໃນ ຟລປ 4:18 ໂປໂລບອກວ່າຂອງຖະຫວາຍທີ່ພີ່ນ້ອງຟີລິບປອຍສົ່ງມາໃຫ້ເໝືອນມີກິ່ນຢ່າງໃດ? ______________________________

ຂ. ແລະເປັນເຄື່ອງບູຊາທີ່ຊອບພະໄທໃຜ? ______________________________

**16** ສະຫລູບເລື່ອງ. ໃຫ້ທ່ານຈົດວິທີທາງຕ່າງ ໆ ທີ່ພີ່ນ້ອງຄຣິດສະຕຽນໃນຟີລິບປອຍຊ່ວຍໂປໂລ.

______________________________

______________________________

______________________________

______________________________

______________________________

______________________________

______________________________

______________________________

______________________________

______________________________

*ຄົນໃດທີ່ຖະຫວາຍຕົວແກ່ພະເຈົ້າກ່ອນ ຈະພ້ອມໃຈຖະຫວາຍສິ່ງຂອງດ້ວຍ.*

**17** ໃນ ໂລມ 12:1 ໂປໂລຊັກຊວນໃຫ້ເຮົາຖະຫວາຍຫຍັງ? ____________________________

*ໃຫ້ຮ່ວມກັນອ້ອນວອນ. ຖ້າຄົນໃດພ້ອມຈະຖະຫວາຍຕົວແກ່ພະເຈົ້າໃຫ້ສະແດງອອກໂດຍຄຳອ້ອນວອນ.*

*ຢ່າລືມບົດເສັງ!*

ຄຳຕອບ:

**1** *ຖືກຈຳຈ່ອງ*

**2** *ກ. ອາດຈະຝາກກັບຕີໂມທຽວ ຂ. ຕີໂມທຽວ*

**3** *ກ. ທັງສອງເປັນຄົນໜຸ່ມ ທັງສອງສະໝັກອອກໄປປ່າວປະກາດພະທຳ ຂ. ໂຢຮັນມາລະໂກປະເຊົາ ຄ. ເອົາໃຈໃສ່ໃນຄວາມສຸກທຸກ ເພິ່ນຮັບໃຊ້ດ້ວຍການປະຕິບັດ*

**4** *ກ. ໃນການງານຂ່າວປະເສີດ ຂ. ຕັ້ງແຕ່ວັນເລີ້ມຕົ້ນ ຄ. ຈົນເຖິງບັດນີ້*

**5** *ກ. ລີເດຍເຊີນໃຫ້ເຂົາມາພັກອາໄສໃນເຮືອນ*
*ຂ. ທຳມະໂລງກໍເຮັດຢ່າງນັ້ນເຊັ່ນດຽວກັນ.*

**6** *ກ. ຝາກຂອງມາຊ່ວຍ*
*ຂ. ບໍ່ດົນເພາະໂປໂລເດີນທາງໄປເທຊະໂລນິກ ຫຼັງອອກຈາກຟີລິບປອຍ.*
*ຄ. ຊ່ວຍຫຼາຍເທື່ອ*

**7** *ກ. ຮ່ວມກັບໂປໂລໃນລາຍໄດ້ລາຍຈ່າຍ ຂ. ມາເກໂດເນຍ*
*ຄ. ບໍ່ໄດ້ຊ່ວຍ ງ. ຟີລິບປອຍ*

**8** *ກ. ຖືກຈຳຈອງ ຂ. ພີ່ນ້ອງຟີລິບປອຍ ຄ. ພີ່ນ້ອງຟີລິບປອຍ*

**9** *ບໍ່ມີໂອກາດທີ່ຈະສະແດງ*

**10** *ກ. ແຂວງມາເກໂດເນຍ ຂ. ໄພ່ພົນຂອງພະເຈົ້າ*

**11** *ກ. ໂກລິນໂທ ຂ. ຟີລິບປອຍ*

**12** *ກ. ໃຫ້ມີສ່ວນໃນການຊ່ວຍເຫຼືອຜູ້ອື່ນ ຂ. ແກ່ອົງພະຜູ້ເປັນເຈົ້າກ່ອນ*

**13** *ກ. ເອປາໂຟດີໂຕ ຂ. ເປັນເພື່ອນຮ່ວມງານ ເປັນຜູ້ຮັບໃຊ້ທີ່ພວກຟີລິບປອຍໃຫ້ມາບົວລະບັດໃນເວລາຂັດສົນ ເພິ່ນຢູ່ບໍ່ສະບາຍຈົນເກືອບຕາຍ ແຕ່ພະເຈົ້າຊົງຊ່ວຍເພິ່ນເພິ່ນສ່ຽງຊີວິດ ໆ ລ ໆ (ບໍ່ຕາຍຕົວ)*

**14** *ກ. ລີເດຍ ແລະ ທຳມະໂຮງ ໆ ລ ໆ*
*ຂ. ເຂົາຖະຫວາຍຕົວເອງໃຫ້ແດ່ພະຜູ້ເປັນເຈົ້າກ່ອນ ແລະ ເຂົາຖະຫວາຍສິ່ງຂອງອີກດ້ວຍ*

**15** *ກ. ກິ່ນຫອມ ຂ. ພະເຈົ້າ*

ຄຳຕອບ (ຕໍ່):

**16** *ເຂົາມີສ່ວນຊ່ວຍຕັ້ງແຕ່ວັນເລີ້ມຕົ້ນ (ຟລປ 1:5)*

*ເຂົາຮັບລ້ຽງແຂກ (ກຈກ 16:15 ແລະ 16:34)*

*ເຂົາຊ່ວຍຕະຫຼອດຈົນກວ່າໂປໂລຖືກຈຳຈອງ (ຟລປ 1:7)*

*ເຂົາຮັບຄວາມຕ້ອງການຂອງໂປໂລໄວ້ກ່ອນ (ຟລປ 4:15-16)*

*ເຂົາຖະຫວາຍເພື່ອປະກາດຂ່າວປະເສີດ (ຟລປ 1:7)*

*ເຂົາຖະຫວາຍເພື່ອຊ່ອຍເຫຼືອເປັນການສົງເຄາະ (2 ກລທ 9:1)*

*ເຂົາຖະຫວາຍຕົວເອງ (2 ກລທ 8:5)*

*ເຂົາຖະຫວາຍໂດຍຄວາມຍິນດີ (2 ກລທ 8:2)*

*ເຂົາຖະຫວາຍໃນເວລາດຽວທີ່ເຂົາເອງທຸກລຳບາກກໍຕາມ (2 ກລທ 8:2)*

*(ໆ ລ ໆ ບໍ່ຕາຍຕົວ)*

**17** *ຖະຫວາຍຕົວແກ່ພະເຈົ້າ*